ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 60 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 01 ເມສາ 2021

## ແຈ້ງເຊີນເຂົ້າຮ່ວມປະກວດລາຄາ

ເຖິງ: ບັນດາບໍລິສັດໃນ ສປປ ລາວ ທີ່ມີຄວາມສົນໃຈເຂົ້າຮ່ວມປະກວດລາຄາ.

ເລື່ອງ: ການຂາຍໂປຣແກຣມບັນຊີສໍາລັບສະຖາບັນການເງິນ (MFI).

- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການປະມູນຂາຍໂປຣແກຣມບັນຊີສໍາລັບສະຖາບັນການເງິນທີ່ຢູ່ໃນພາຍໃຕ້ການຄຸ້ມຄອງຂອງ ທຫລ ສະບັບເລກທີ 267/ທຫລ, ລົງວັນທີ 27 ເມສາ 2020.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງບັນດາບໍລິສັດໃນ ສປປ ລາວ ທີ່ມີຄວາມສົນໃຈເຂົ້າຮ່ວມປະກວດລາຄາ ເພື່ອຄັດເລືອກເປັນຜູ້ສະໜອງການບໍລິການ ແລະ ການບໍາລຸງຮັກສາ **"ໂປຣແກຣມບັນຊີສໍາລັບສະຖາບັນການເງິນທີ່ຢູ່ໃນພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ (Micro finance institutions: MFI)"** ໃຫ້ແກ່ບັນດາສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ມີຄວາມຕ້ອງການນໍາໃຊ້ ໂດຍມີມາດຖານ ແລະ ເງື່ອນໄຂດັ່ງນີ້:

1. ເປັນບໍລິສັດທີ່ມີ:
   + ໃບອະນຸຍາດດໍາເນີນທຸລະກິດ
   + ໃບທະບຽນວິສາຫະກິດ
   + ໃບທະບຽນອາກອນພາຍໃນ
2. ບໍລິສັດທີ່ຈະເຂົ້າຮ່ວມການປະມູນ ຕ້ອງເປັນບໍລິສັດມີທີ່ຕັ້ງຢູ່ໃນ ສປປ ລາວ, ມີປະສົບການທາງດ້ານໄອທີ ແລະ ການບັນຊີ ຢ່າງຕໍ່າ 03 ປີ.
3. ບໍລິສັດທີ່ຈະເຂົ້າຮ່ວມການປະມູນ ຕ້ອງມີຖານະທາງການເງິນດີ (ມີເອກະສານຢັ້ງຢືນ).
4. ບໍລິສັດທີ່ຈະເຂົ້າຮ່ວມການປະມູນ ຕ້ອງປະກອບເອກະສານການປະມູນ ພ້ອມທັງໃສ່ລາຄາການປະມູນ (ຖ້າມີຫຍັງເພີ່ມເຕີມ ໃຫ້ຂຽນອະທິບາຍປະກອບໃສ່).
5. ກໍານົດ-ເວລາ ຂາຍຊອງປະມູນ, ເປີດຊອງ ແລະ ຄ່າຊອງປະມູນ:

- ເອກະສານການປະມູນ ຈະເລີ່ມຂາຍ ແຕ່ວັນທີ 19../04../2021 ເປັນຕົ້ນໄປ ເປັນເວລາ 15 ວັນລັດຖະການ.
- ມື້ສົ່ງຊອງປະມູນ ແລະ ເປີດຊອງປະມູນ ຈະແຈ້ງໃຫ້ຊາບຕາມພາຍຫຼັງ.
- ຊອງປະມູນລາຄາ 500.000 ກີບ/ຊອງ, ເງິນຄ່າຊອງປະມູນ ຈະບໍ່ສົ່ງຄືນ ເຖິງແມ່ນບໍລິສັດຈະຊະນະການປະມູນ ຫຼື ບໍ່ຊະນະການປະມູນ.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**

ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

6. ບໍລິສັດທີ່ຈະເຂົ້າຮ່ວມການປະມູນ ຕ້ອງຖືຊອງປະມູນມາເອງໃນມື້ເປີດຊອງປະມູນ, ຖ້າກໍລະນີໃຫ້ຜູ້ຕາງໜ້າມາແທນ ຕ້ອງມີໜັງສືມອບສິດເປັນລາຍລັກອັກສອນຈາກທາງບໍລິສັດ. ໃນກໍລະນີມື້ເປີດຊອງປະມູນ ຫາກບໍລິສັດໃດ ບໍ່ປະຕິບັດຕາມເວລາເຂົ້າຮ່ວມການປະມູນທີ່ຄະນະຮັບຜິດຊອບແຈ້ງໄວ້ ຖືວ່າໝົດສິດໃນການເຂົ້າຮ່ວມການປະມູນ.

ດັ່ງນັ້ນ, ຈິ່ງຂໍເຊີນບັນດາບໍລິສັດໃນ ສປປ ລາວ ທີ່ມີຄວາມສົນໃຈເຂົ້າຮ່ວມຕາມການເຊີນດ້ວຍ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພັດສະຖາພອນ ແກ້ວວົງວິຈິດ

<u>ຕິດຕໍ່ພົວພັນ:</u>

- ເບີໂທລະສັບ: 021 241819, 021 241271 (ໃນໂມງລັດຖະການ)
- ອີເມວ: somboun4ever@bol.gov.la